ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 139 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 12 ສິງຫາ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ແລະ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 08/ສພຊ, ລົງວັນທີ 01 ກໍລະກົດ 2020 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ແລະ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 11/ຄປຈ, ລົງວັນທີ 15 ກໍລະກົດ 2020.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ແລະ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສະພາແຫ່ງຊາດ** ເລກທີ 08 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 01 / 07 / 20

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ແລະ ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າ ດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ແລະ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ໃນວາລະກອງປະຊຸມ ຄັ້ງວັນທີ 01 ກໍລະກົດ 2020.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນ ນ້ຳ ແລະ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 84 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 1 ກໍລະກົດ 2020

# ກົດໝາຍວ່າດ້ວຍການປັບປຸງ ບາງມາດຕາຂອງກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ແລະ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ

**ມາດຕາ 1 ການປັບປຸງເນື້ອໃນບາງມາດຕາຂອງກົດໝາຍ**

ກົດໝາຍສະບັບນີ້ ກໍານົດອອກເພື່ອປັບປຸງເນື້ອໃນບາງມາດຕາຂອງກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ແລະ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ຮັບປະກັນການຈັດຕັ້ງປະຕິບັດວຽກງານ ນໍ້າ ແລະ ຊັບພະຍາກອນນໍ້າ ແລະ ການປົກປັກຮັກສາສິ່ງແວດລ້ອມ ໃຫ້ສອດຄ່ອງກັບສະພາບຕົວຈິງ ດັ່ງນີ້:

I. **ກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ**

**ມາດຕາ 34 ທີ່ດິນບໍລິເວນນໍ້າ**

ທີ່ດິນບໍລິເວນນໍ້າ ແມ່ນ ທີ່ດິນທີ່ຢູ່ພື້ນນໍ້າ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນໍ້າ ຊຶ່ງນອນຢູ່ໃນພື້ນທີ່ ທີ່ດິນປະເພດອື່ນ ເປັນຕົ້ນ ເຂດພື້ນທີ່ດິນທາມ, ໜອງ, ບຶງ, ທົ່ງຫຍ້ານໍ້າຖ້ວມ, ທີ່ດິນນໍ້າອອກບໍ່, ທີ່ດິນແຄມນໍ້າ, ທີ່ດິນກາງນໍ້າ, ທີ່ດິນປົ່ງໃໝ່, ທີ່ດິນນໍ້າບົກປະ ຫຼື ກຸດ, ທີ່ດິນທີ່ເກີດຈາກການດັດແປງ ຫຼື ອວ່າຍແລວນໍ້າ, ນໍ້າຂັງ ຫຼື ໄຫຼຜ່ານ ທີ່ເກີດຂຶ້ນໂດຍທໍາມະຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງມີລັກສະນະຖາວອນ ຫຼື ຊົ່ວຄາວ.

ໃນການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ທ້ອງຖິ່ນ ລວມທັງການນໍາໃຊ້ທີ່ດິນ ຕ້ອງໃຫ້ຄວາມສໍາຄັນແກ່ທີ່ດິນບໍລິເວນນໍ້າ ເພື່ອຮັກສາລະບົບນິເວດ, ການບໍາບັດນໍ້າເປື້ອນແບບທໍາມະຊາດ, ປ້ອງກັນໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ.

ຂະແໜງການທີ່ຄຸ້ມຄອງການນໍາໃຊ້ທີ່ດິນແຕ່ລະປະເພດ ທີ່ມີທີ່ດິນບໍລິເວນນໍ້າ ເປັນຜູ້ສໍາຫຼວດ, ຈັດສັນທີ່ດິນບໍລິເວນນໍ້າ ແລະ ວາງແຜນການປົກປັກຮັກສາ, ພັດທະນາ ແລະ ຟື້ນຟູທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ການເຂົ້າຮ່ວມຂອງປະຊາຊົນໃນເຂດພື້ນທີ່ດັ່ງກ່າວ.

**ມາດຕາ 35 ການນໍາໃຊ້, ປົກປັກຮັກສາ ແລະ ພັດທະນາ ທີ່ດິນບໍລິເວນນໍ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດພັດທະນາ ແລະ ນໍາໃຊ້ທີ່ດິນບໍລິເວນນໍ້າ ທີ່ເກີດຂຶ້ນໂດຍທໍາມະຊາດ ໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ, ແຜນການນໍາໃຊ້ທີ່ດິນຂອງຂະແໜງການ ແລະ ແຜນຍຸດທະສາດການຄຸ້ມຄອງ, ການບໍລິຫານ ແລະ ການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ ແຕ່ຕ້ອງຂໍອະນຸຍາດນໍາຂະແໜງການທີ່ຄຸ້ມຄອງການນໍາໃຊ້ທີ່ດິນແຕ່ລະປະເພດ ທີ່ມີທີ່ດິນບໍລິເວນນໍ້າ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ແລະ ຕ້ອງຮັບປະກັນບໍ່ສ້າງຜົນເສຍຫາຍຕໍ່ປະລິມານ, ຄຸນນະພາບຂອງນໍ້າ, ບໍ່ໃຫ້ຖົມ, ບໍ່ໃຫ້ຂຸດ, ບໍ່ໃຫ້ປ່ຽນແລວນໍ້າ ແລະ ການໄຫຼຂອງນໍ້າ ໂດຍບໍ່ໄດ້ຮັບອະນຸຍາດ, ຫຼີກລ່ຽງການເຊາະເຈື່ອນ, ໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ, ຮັບປະກັນຄວາມຍືນຍົງຂອງລະບົບນິເວດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດພັດທະນາ ແລະ ນໍາໃຊ້ທີ່ດິນບໍລິເວນນໍ້າ ທີ່ສ້າງຂຶ້ນໃນທີ່ດິນ ທີ່ເປັນສິດນໍາໃຊ້ທີ່ດິນຂອງຕົນ ຕາມການອະນຸຍາດຂອງລັດ ລວມທັງສິດນໍາໃຊ້ທີ່ດິນຕາມປະເພນີ ເປັນຕົ້ນ ໜອງລ້ຽງປາ ຫຼື ລ້ຽງສັດນໍ້າ ໂດຍບໍ່ຕ້ອງຂໍອະນຸຍາດນໍາຂະແໜງການທີ່ຄຸ້ມຄອງການນໍາໃຊ້ທີ່ດິນແຕ່ລະປະເພດທີ່ມີທີ່ດິນບໍລິເວນນໍ້າ.

ການປົກປັກຮັກສາ ແລະ ພັດທະນາ ທີ່ດິນບໍລິເວນນໍ້າ ຕ້ອງສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ທ້ອງຖິ່ນໂດຍບໍ່ໃຫ້ມີຜົນກະທົບຕໍ່ລະບົບນິເວດ ແລະ ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ.

## II. ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ

**ມາດຕາ 18 ການສ້າງແຜນຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ**

ການສ້າງແຜນຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ ເປັນສ່ວນໜຶ່ງໃນແຜນຈັດສັນທີ່ດິນທ້ອງຖິ່ນ ຕ້ອງປະຕິບັດ ດັ່ງນີ້:

1. ກໍານົດແຜນການນໍາໃຊ້ຊັບພະຍາກອນທໍາມະຊາດແບບຍືນຍົງ, ແຜນການນໍາໃຊ້ທີ່ດິນ ແລະ ກໍານົດເຂດປະເມີນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ;

2. ຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃນສະຖານທີ່ໃດໜຶ່ງ ໂດຍສະເພາະ ເຂດທີ່ຢູ່ອາໄສ, ເຂດສະຫງວນ, ເຂດກະສິກໍາ ແລະ ເຂດອຸດສາຫະກໍາໃນອະນາຄົດ, ສະຖານທີ່ຕັ້ງ ແລະ ໂຄງການລົງທຶນ;

3. ສ້າງມາດຕະຖານ, ຫຼັກການກ່ຽວກັບການກໍານົດຫຼັກໝາຍ ແລະ ເຂດພື້ນທີ່ ທີ່ໄດ້ກໍານົດໄວ້ໃນຂໍ້ 2 ຂອງມາດຕານີ້.

**ມາດຕາ 19 ການປະເມີນສິ່ງແວດລ້ອມແບບຍຸດທະສາດ**

ການປະເມີນສິ່ງແວດລ້ອມແບບຍຸດທະສາດ ແມ່ນ ຂະບວນການຄາດຄະເນຜົນກະທົບທີ່ອາດຈະເກີດຂຶ້ນຕໍ່ສິ່ງແວດລ້ອມ ໃນເວລາວາງນະໂຍບາຍ, ແຜນຍຸດທະສາດ ແລະ ແຜນງານຕ່າງໆ ຊຶ່ງລວມເອົາການພິຈາລະນາບັນຫາທີ່ພົວພັນກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດ. ການປະ

ເມີນຜົນກະທົບດັ່ງກ່າວ ຕ້ອງຊີ້ໃຫ້ເຫັນ ວິທີການ, ມາດຕະການຫຼີກເວັ້ນ ຫຼື ຫຼຸດຜ່ອນຜົນກະທົບ ທີ່ຈະເກີດຂຶ້ນຕໍ່ສິ່ງແວດລ້ອມ ແນໃສ່ບັນລຸເປົ້າໝາຍການພັດທະນາແບບຍືນຍົງ.

ໃນການສ້າງນະໂຍບາຍ, ແຜນຍຸດທະສາດ ແລະ ແຜນງານຕ່າງໆ ຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ຂະແໜງການ ພະລັງງານ ແລະ ບໍ່ແຮ່, ກະສິກຳ ແລະ ປ່າໄມ້, ອຸດສາຫະກຳ ແລະ ການຄ້າ, ໂຍທາທິການ ແລະ ຂົນສົ່ງ, ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ສາທາລະນະສຸກ ຕ້ອງດຳເນີນການປະເມີນສິ່ງແວດລ້ອມແບບຍຸດທະສາດ ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດ້ວຍການເຂົ້າຮ່ວມຂອງການຈັດຕັ້ງ ແລະ ປະຊາຊົນທີ່ຈະໄດ້ຮັບຜົນກະທົບໂດຍກົງ ຫຼື ທາງອ້ອມຈາກນະໂຍບາຍ, ແຜນຍຸດທະສາດ ແລະ ແຜນງານຕ່າງໆ. ການປະເມີນດັ່ງກ່າວ ຕ້ອງໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ/ຫຼື ແຜນຈັດສັນທີ່ດິນທ້ອງຖິ່ນ.

**ມາດຕາ 2 ການປັບປຸງເນື້ອໃນຂອງມາດຕາ**

ກົດໝາຍສະບັບນີ້ ປັບປຸງເນື້ອໃນມາດຕາ 34, 35 ຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017 ແລະ ປັບປຸງເນື້ອໃນມາດຕາ 18, 19 ຂອງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012.

**ມາດຕາ 3 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້